ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນ ຂອງສານ ແຂວງຫຼວງພະບາງ
ເລກທີ: 41
ລົງວັນທີ: 10/9/2018

...............000.............

# ຄຳຮ້ອງ

ຮຽນ: ທ່ານຫົວໜ້າພະແນກ ຍຸຕິທາ ແຂວງ ຫຼວງພະບາງ ທີ່ນັບຖື

ຮຽນ: ທ່ານຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຂວງ ຫຼວງພະບາງ ທີ່ນັບຖື

ເລື່ອງ: ຂໍເລື່ອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

- ອີງຕາມຄຳຮ້ອງຂໍຮື້ຟື້ນ ຕາມຂາເຂົ້າຂອງ ອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 116,ລົງວັນທີ່ 21/8/2018.

ຂ້າພະເຈົ້າ ນາງ ບຸນທັນ ລັກປະສິດ ອາຍຸ 60 ປີ,ສັນຊາດລາວ,ອາຊີບຄ້າຂາຍ,ປັດຈຸບັນຢູ່ບ້ານ ສັງຄະໂລກ ໜ່ວຍ 05 ນະຄອນຫຼວງພະບາງ ແຂວງ ຫຼວງພະບາງ ເບີໂທລະສັບ 020 22133456.ໃນຖານະເປັນ (ຈາເລີຍ) ໃນຄະດີລະຫວ່າງ

- ທ້າວ ເພັດຈຳພອນ ບ້ານ ຊຽງທອງ...................................................................ໂຈດ
- ນາງ ບຸນທັນ ລັກປະສິດ ບ້ານ ສັງຄະໂລກ..........................................................ຈຳເລີຍ

- **ກ່ຽວເລື່ອງ: ທວງເອົາເງິນຄືນ**

ມີຈຸດປະສົງຂຽນຄຳຮ້ອງສະບັບນີ້ຮຽນມາຍັງທ່ານຫົວໜ້າພະແນກ ຍຸຕິທຳ ແຂວງ ຫຼວງພະບາງ ແລະ ຫົວໜ້າຫ້ອງການຄຸ້ມຄອງຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຂໍເລື່ອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານອອກໄປກ່ອນ. ເນື່ອງຈາກວ່າປັດຈຸບັນຂ້າພະເຈົ້າເຊິ່ງເປັນຝ່າຍອັບປະໂຫຍດ ແມ່ນໄດ້ຂຽນຄຳຮ້ອງຂໍຮື້ຟື້ນຄະດີໄປຍັງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມຄຳຮ້ອງຂາສະບັບລົງວັນທີ່ 19 ສິງຫາ 2018 ແລະ ຕາມຂາເຂົ້າຂອງອົງການໄອຍະການປະຊາຊົນສູງສຸດ ເລກທີ່ 116,ລົງວັນທີ່ 21/8/2018. ເນື່ອງຈາກວ່າການຕັດສິນ ແລະ ພິພາກສາຂອງສານແຕ່ລະຂັ້ນຍັງບໍ່ທັນຖືກຕ້ອງ ແລະ ຍຸຕິທຳເທື່ອ, ເພາະວ່າດິນຕອນຂັດແຍ່ງດັ່ງກ່າວແມ່ນເປັນດິນຂອງຂ້າພະເຈົ້າແທ້ ແລະ ຂ້າພະເຈົ້າກໍ່ໄດ້ຂາຍທັງໝົດຕອນເລີຍ ບໍ່ແມ່ນຂາຍເປັນຕາແມັດ, ເຊິ່ງໃບຕາດິນສະບັບເລກທີ່ 223 ລົງວັນທີ່ 7 ກຸມພາ

2014 ມີເນື້ອທີ່ 1 ເຮັກຕາກັບ 5.686 ຕາແມັດນັ້ນ ທີ່ຈິງແລ້ວມີເນື້ອທີ່ພຽງແຕ່ 5.686 ຕາແມັດ, ສ່ວນເນື້ອທີ່ 1 ເຮັກຕານັ້ນແມ່ນບໍ່ມີ ມັນແມ່ນຄວາມຜິດພາດໃນການອອກໃບຕາດິນຂອງ ພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ແຂວງ ຫຼວງພະບາງເອງທີ່ພິມຜິດພາດ ແລະ ພາກສ່ວນດັ່ງກ່າວກໍ່ໄດ້ອອກໜັງສືຢັ້ງຢືນວ່າແມ່ນພິມຜິດແຕ່ທ້າວ ເພັດຈຳພອນ (ໂຈດ) ຍັງມາຮ້ອງຟ້ອງວ່າຂ້າພະເຈົ້າຕົວະຂາຍດິນທີ່ມີເນື້ອທີ່ບໍ່ຄົບຖ້ວນໃຫ້ແກ່ຜູ້ກ່ຽວ.

ສະນັ້ນ ຂ້າພະເຈົ້າໃນຖານະ(ຈຳເລີຍ)ຜູ້ໄດ້ຮັບຄວາມອັບປະໂຫຍດ ຈຶ່ງໄດ້ຂຽນຄຳຮ້ອງຂໍຮື້ຟື້ນຄະດີຄືນໃໝ່ມາຍັງອົງການໄອຍະການປະຊາຊົນສູງສຸດເພື່ອຂໍຮື້ຟື້ນຄະດີຄືນໃໝ່, ດັ່ງນັ້ນ ຈຶ່ງຂໍໃຫ້ທ່ານໄດ້ເລື່ອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານອອກໄປກ່ອນ ຈົນກວ່າຈະມີຂໍ້ຕົກລົງ ຫຼື ຄຳເຫັນຂອງໄອຍະການສູງສຸດອອກມາແລ້ວຈຶ່ງ ນຳມາຈັດຕັ້ງປະຕິບັດຕາມຂັ້ນຕອນຂອງກົດໝາຍ.

ດັ່ງນັ້ນ ຈຶ່ງໄດ້ຂຽນຄຳຮ້ອງສະບັບນີ້ຮຽນມາຍັງທ່ານ ເພື່ອຂໍໃຫ້ທ່ານໄດ້ຄົ້ນຄ້ວາພິຈາລະນາຕາມຄຳຮ້ອງສະບັບນີ້ດ້ວຍ

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ທີ່: ຫຼວງພະບາງ,ວັນທີ່: 05/9/2018

**ເຈົ້າຂອງຄຳຮ້ອງ**

ນ. ບຸນທັນ

**ຢັ້ງຢືນນາຍບ້ານໆ ສັງຄະໂລກ**

ນາຍບ້ານ ບ້ານ ສັງຄະໂລກ ນະຄອນ-ຫຼວງພະບາງ

ຄຳພັນ ວົງສອນເພັດ